ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ ເລກທີ: 0357 /ຈນວ

ລົງວັນທີ: 17 ພຶດສະພາ 2019

# ຂໍ້ຕົກລົງ

## ວ່າດ້ວຍການກຳນົດຂອບເຂດ ແລະ ປະເມີນຫົວໜ່ວຍລາຄາທົດແທນຄ່າເສຍຫາຍ ໃຫ້ຜູ້ທີ່ຖືກກະທົບ ຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ເໜືອ ຊ່ວງໄລຍະນະຄອນຫຼວງວຽງຈັນ (ບ້ານໄຊມຸງຄຸນ ຫາ ບ້ານນາດີ)

- ອີງຕາມ ມາດຕາ 19, 20 ໝວດທີ IV ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ມາດຕາ 64 ຂອງກົດໝາຍວ່າດ້ວຍກະສິກຳ ສະບັບເລກທີ 01/98/ລພຊ, ລົງວັນທີ 10 ຕຸລາ 1998; ມາດຕາ 71, 72 ໝວດທີ 3 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003; ມາດຕາ 13 ການປະເມີນມູນຄ່າທີ່ດິນ ຂອງດຳລັດ ສະບັບເລກທີ 88/ນຍ, ລົງວັນທີ 03 ມິຖຸນາ 2008 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ ແລະ ດຳລັດ ສະບັບເລກທີ 84/ນຍ, ລົງວັນທີ 05 ເມສາ 2016 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ;
- ອີງຕາມ ມະຕິຂອງຄະນະປະຈຳສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ I ສະບັບເລກທີ 035/ຄປຈ.ສປນວ, ລົງວັນທີ 24 ເມສາ 2019;
- ອີງຕາມ ການຢັ້ງຢືນ ແລະ ນຳສະເໜີຂອງຄະນະຮັບຜິດຊອບໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ເໜືອ ຊ່ວງໄລຍະນະຄອນຫຼວງວຽງຈັນ (ບ້ານໄຊມຸງຄຸນ ຫາ ບ້ານນາດີ).

### ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາ, ກຳນົດລາຄາທົດແທນສິ່ງກໍ່ສ້າງ ແລະ ການຈັດສັນຜູ້ຖືກຜົນກະທົບ ເພື່ອຮັບປະກັນໃຫ້ແກ່ການແກ້ໄຂ, ໄກ່ເກ່ຍຜູ້ຖືກຜົນກະທົບຈາກໂຄງການປັບປຸງ ແລະ ສ້ອມແປງເສັ້ນທາງຫຼວງແຫ່ງຊາດ ເລກທີ 13 ເໜືອ ຢູ່ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ໄດ້ຮັບການທົດແທນ, ໄດ້ຮັບການຊ່ວຍເຫຼືອ ແລະ ຟື້ນຟູຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ດີກ່ວາເກົ່າ ຫຼື ເທົ່າເດີມ, ພ້ອມທັງເຮັດໃຫ້ການແກ້ໄຂ, ໄກ່ເກ່ຍມີຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດໃຫ້ມີຄວາມຖືກຕ້ອງ ເໝາະສົມ ແລະ ມີປະສິດທິຜົນສູງ.

**ມາດຕາ 2 ກ່ຽວກັບໂຄງການ**

ໂຄງການປັບປຸງ ແລະ ສ້ອມແປງເສັ້ນທາງຫຼວງແຫ່ງຊາດ ເລກທີ 13 ເໜືອ ຢູ່ເມືອງນາຊາຍທອງ ຕໍ່ໄປນີ້ເອີ້ນວ່າ " **ໂຄງການທາງ 13 ເໜືອ** " ແມ່ນໂຄງການໜຶ່ງທີ່ເປັນບຸລິມະສິດຂອງລັດຖະບານ ເພື່ອຊຸກຍູ້ສົ່ງເສີມ ແລະ ຮອງຮັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ເຊິ່ງໄດ້ຮັບເງິນກູ້ຢືມດອກເບ້ຍຕໍ່າຈາກ 3 ສະຖາບັນການເງິນ ຄື: ທະນາຄານໂລກ (WB), ທະນາຄານລົງທຶນພື້ນຖານໂຄງລ່າງແຫ່ງອາຊີ (AIIB), ກອງທຶນນໍດິກ (NDF) ແລະ ທຶນສົມທົບຂອງລັດຖະບານລາວ ໂຄງການດັ່ງກ່າວມີຄວາມຍາວທັງໝົດ 58 ກິໂລແມັດ ມີມູນຄ່າກໍ່ສ້າງທັງໝົດ 128 ລ້ານໂດລາສະຫະລັດ; ໂຄງການດັ່ງກ່າວໄດ້ອອກແບບເປັນໜ້າທາງເບຕົງເສີມເຫຼັກ ປັບປຸງຍົກລະດັບຂົວ 7 ແຫ່ງ, ປັບປຸງລະບົບລະບາຍນ້ຳ, ປັບປຸງມຸມໂຄ້ງຂອງເສັ້ນທາງ ໃຫ້ໄດ້ມາດຕະຖານ ແລະ ຍົກລະດັບທາງໃຫ້ສູງຂຶ້ນໃນເຂດທີ່ມີຄວາມສ່ຽງເກີດນ້ຳຖ້ວມ. ໄລຍະການດຳເນີນໂຄງການ 10 ປີ, ໄລຍະການກໍ່ສ້າງ 03 ປີ (2019-2023), ໄລຍະບຸລະນະຮັກສາ 07 ປີ (2023-2027), ໄລຍະແຕ່ສາມແຍກສີເກີດ ຫາບ້ານສົງເປືອຍ ປັບປຸງ ແລະ ຂະຫຍາຍຈາກ 2 ເລນ ເປັນ 4 ເລນ, ຄວາມກ້ວາງທັງໝົດ 23 ແມັດ; ໄລຍະແຕ່ບ້ານສົງເປືອຍ ຫາ ໂພນໂຮງ ປັບປຸງເປັນທາງ 2 ເລນ, ຄວາມກ້ວາງທັງໝົດ 15 ແມັດ.

**ມາດຕາ 3 ຂອບເຂດນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບການຈັດຕັ້ງຂອງພັກ-ລັດ, ການຈັດຕັ້ງມະຫາຊົນ, ສັງຄົມ, ບຸກຄົນນິຕິບຸກຄົນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອທົດແທນສິ່ງກີດຂວາງ ແລະ ຈັດສັນຜູ້ທີ່ຖືກຜົນກະທົບຈາກໂຄງການທາງ 13 ເໜືອ ຊ່ວງເມືອງນາຊາຍທອງ ນະຄອນຫຼວງວຽງຈັນ ມີໄລຍະຍາວ 31,8 ກິໂລແມັດ, ຜ່ານ 24 ບ້ານ, ແຕ່ບ້ານໄຊມຸງຄຸນ ຫາ ບ້ານນາດີ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ.

**ມາດຕາ 4 ຂອບເຂດທີ່ໄດ້ຮັບຜົນກະທົບຈາກໂຄງການທາງ 13 ເໜືອ**

**4.1.** ຂອບເຂດຂອງໂຄງການທາງ 13 ເໜືອ ຊ່ວງໄລຍະເມືອງນາຊາຍທອງ ມີຄວາມຍາວທັງໝົດ 31,8 ກິໂລແມັດ, ສ່ວນຄວາມກວ້າງ-ແຄບ ແຕກຕ່າງກັນຂຶ້ນກັບພູມສັນຖານ ແລະ ຄວາມຈຳເປັນໃນການນຳໃຊ້ຕົວຈິງຂອງໂຄງການ, ບາງຈຸດແມ່ນທາງສອງເລນ ແລະ ບາງຈຸດແມ່ນທາງ 4 ເລນ, ບາງຈຸດເປັນທາງໂຄ້ງ, ບາງຈຸດເປັນບ່ອນພັກຈອດລົດເມ ເຊິ່ງຂອບເຂດສະຫງວນເຫຼົ່ານັ້ນ ຈະຖືກຈັດເຂົ້າໃນລະບົບທົດແທນ ແລະ ເປັນເຂດສະຫງວນໂຄງການຢ່າງຖາວອນ.

**4.2.** ທີ່ດິນແຕ່ລະຕອນ ທີ່ເຫຼືອຈາກຂອບເຂດຂອງໂຄງການ ແມ່ນເຈົ້າຂອງໂຄງການຈະເປັນຜູ້ຮັບຜິດຊອບອອກຄ່າໃຊ້ຈ່າຍໃນການດັດແກ້ ແລະ ອອກໃບຕາດິນໃໝ່ໃນສ່ວນທີ່ເຫຼືອ ໃຫ້ຜູ້ທີ່ຖືກຜົນກະທົບ; ທີ່ດິນທີ່ຍັງເຫຼືອນ້ອຍ ຫຼື ຫຼາຍ ແມ່ນຍັງເປັນສິດໃຊ້, ສິດນຳໃຊ້ທີ່ດິນ ທີ່ຖືກຕ້ອງຕາມລະບຽບກົດໝາຍ ຂອງຜູ້ທີ່ຖືກຜົນກະທົບ.

**ມາດຕາ 5 ຫຼັກການ ແລະ ວິທີຄິດໄລ່ຄ່າທົດແທນ**

5.1. ກຳນົດຫຼັກການ ແລະ ວິທີຄິດໄລ່ຫົວໜ່ວຍລາຄາທົດແທນສິດໃຊ້, ສິດນຳໃຊ້ ຢູ່ແຕ່ລະບ້ານໂດຍເອົາລາຄາຢູ່ເຂດປະເມີນມູນຄ່າທີ່ດິນ ຕາມຂໍ້ຕົກລົງສະບັບເລກທີ 352/ສນຍ-ອຄດຊ, ລົງວັນທີ 31 ພຶດສະພາ 2011 ທີ່ໃຊ້ສຳລັບການຈົດທະບຽນ ມອບ-ໂອນ ສິດນຳໃຊ້ທີ່ດິນປະຈຸບັນ ບວກກັບລາຄາຊື້-ຂາຍສິດນຳໃຊ້ທີ່ດິນຢູ່ແຕ່ລະເຂດ ມາສະເລ່ຍເປັນລາຄາທົດແທນ ຕາມທີ່ບັນຍັດໄວ້ໃນດຳລັດ

ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ສະບັບເລກທີ 84/ນຍ, ລົງວັນທີ 05 ເມສາ 2016.

5.2. ຫຼັກການ ແລະ ວິທີຄິດໄລ່ການທົດແທນສິ່ງປຸກສ້າງ ແມ່ນໃຫ້ປະຕິບັດຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 69/ນຍ, ລົງວັນທີ 05 ສິງຫາ 2010 ວ່າດ້ວຍການຮັບຮອງເອົາ ແລະ ປະກາດໃຊ້ຫົວໜ່ວຍກໍ່ສ້າງຂົວ-ທາງ ແລະ ເຄຫາສະຖານ ແລະ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການກວດກາຕີລາຄາເຮືອນ, ສິ່ງປຸກສ້າງ ແລະ ວັດຖຸຮັບໃຊ້ໃນຄົວເຮືອນ ສະບັບເລກທີ 194/ນຍ, ລົງວັນທີ 14 ພະຈິກ 1994 ໂດຍບໍ່ຄິດໄລ່ມູນຄ່າຫຼຸ້ຍຫ້ຽນເຂົ້ານຳ.

5.3. ວິທີຄິດໄລ່ການທົດແທນຜົນລະປູກ ແມ່ນໃຫ້ປະຕິບັດຕາມມາດຕາ 64 ຂອງກົດໝາຍວ່າດ້ວຍກະສິກຳ ສະບັບເລກທີ 01/98/ສພຊ, ລົງວັນທີ 10 ຕຸລາ 1998.

5.4. ຜູ້ທີ່ຖືກຜົນກະທົບ ສາມາດຍ້າຍເອົາສິ່ງປຸກສ້າງ ແລະ ຕົ້ນໄມ້ຂອງຕົນອອກໄປໄດ້ ພາຍຫຼັງທີ່ໄດ້ຮັບເງິນຄ່າທົດແທນ, ແຕ່ການຍ້າຍເອົາສິ່ງປຸກສ້າງ ແລະ ຕົ້ນໄມ້ໄປນຳໃຊ້ນັ້ນ ຈະຕ້ອງປະຕິບັດໃຫ້ແລ້ວທັນຕາມກຳນົດເວລາທີ່ທາງໂຄງການວາງໄວ້ ພາຍໃນ 60 ວັນ, ຖ້າຜູ້ທີ່ໄດ້ຮັບຜົນກະທົບ ບໍ່ປະຕິບັດຕາມການຕົກລົງ ຕາມເງື່ອນໄຂຂອງການທົດແທນ ທາງໂຄງການຈະນຳໃຊ້ມາດຕະການຢ່າງເຂັ້ມງວດ.

**ມາດຕາ 6 ຮັບຮອງເອົາຫົວໜ່ວຍລາຄາທົດແທນຄ່າເສຍຫາຍຈາກຜົນກະທົບຕໍ່ສິດໃຊ້, ສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ ແລະ ຜົນລະປູກ**

6.1. ຮັບຮອງເອົາຫົວໜ່ວຍລາຄາທົດແທນຄ່າເສຍຫາຍຈາກຜົນກະທົບຕໍ່ສິດໃຊ້ ແລະ ສິດນຳໃຊ້ທີ່ດິນ ທີ່ຖືກຂອບເຂດຜົນກະທົບຂອງໂຄງການທາງ 13 ເໜືອ ຕາມທີ່ກຳນົດໄວ້ໃນຕາຕະລາງຄິດໄລ່ຫົວໜ່ວຍລາຄາທົດແທນຄ່າເສຍຫາຍຈາກຜົນກະທົບຕໍ່ທີ່ດິນແຕ່ລະປະເພດ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ສະບັບເລກທີ 2026/ພຊສ.ນວ, ລົງວັນທີ 11 ມີນາ 2019, ຊຶ່ງເປັນເອກະສານຊ້ອນທ້າຍທີ 1 ຂອງຂໍ້ຕົກລົງສະບັບນີ້.

6.2. ຮັບຮອງເອົາຫົວໜ່ວຍລາຄາທົດແທນຄ່າເສຍຫາຍຈາກຜົນກະທົບຕໍ່ສິ່ງປຸກສ້າງ ທີ່ຖືກຂອບເຂດຜົນກະທົບຂອງໂຄງການທາງ 13 ເໜືອ ຕາມທີ່ກຳນົດໄວ້ໃນຕາຕະລາງຄິດໄລ່ຫົວໜ່ວຍລາຄາທົດແທນຄ່າເສຍຫາຍຈາກຜົນກະທົບຕໍ່ສິ່ງປຸກສ້າງແຕ່ລະປະເພດ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ສະບັບເລກທີ 2231/ຍທຂ.ນວ, ລົງວັນທີ 04 ມີນາ 2019, ຊຶ່ງເປັນເອກະສານຊ້ອນທ້າຍທີ 2 ຂອງຂໍ້ຕົກລົງສະບັບນີ້.

6.3. ຮັບຮອງເອົາຫົວໜ່ວຍລາຄາທົດແທນຄ່າເສຍຫາຍຈາກຜົນກະທົບຕໍ່ຜົນລະປູກ ທີ່ຖືກຂອບເຂດຜົນກະທົບຂອງໂຄງການທາງ 13 ເໜືອ ຕາມທີ່ກຳນົດໄວ້ໃນຕາຕະລາງຄິດໄລ່ຫົວໜ່ວຍລາຄາທົດແທນຄ່າເສຍຫາຍຈາກຜົນກະທົບຕໍ່ຜົນລະປູກແຕ່ລະປະເພດ ຂອງພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ສະບັບເລກທີ 838/ກປ.ນວ, ລົງວັນທີ 04 ມີນາ 2019, ຊຶ່ງເປັນເອກະສານຊ້ອນທ້າຍທີ 3 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 7 ແຫຼ່ງທຶນໃນການທົດແທນ**

ງົບປະມານໃນການທົດແທນ ແມ່ນນຳໃຊ້ງົບປະມານ ຂອງໂຄງການທາງ 13 ເໜືອ ຕາມຄວາມຮັບ ຜິດຊອບ ແລະ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 8 ພາກສ່ວນຮັບຜິດຊອບການທົດແທນ**

8.1. ຜູ້ທີ່ຖືກຜົນກະທົບຈາກໂຄງການທາງ 13 ເໜືອ ສາມາດສະເໜີຮັບເອົາຄ່າທົດແທນໄດ້ຈາກຄະນະໄກ່ເກ່ຍສິ່ງກີດຂວາງເມືອງນາຊາຍທອງ ໂດຍແມ່ນຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງນາຊາຍທອງ ເປັນຈຸດປະສານງານ; ສະຖາບັນຄົ້ນຄວ້າ ໂຍທາທິການ ແລະ ຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຊຸກຍູ້, ຕິດຕາມ ແລະ ກວດກາການທົດແທນດັ່ງກ່າວ.

8.2. ຜູ້ທີ່ຖືກຜົນກະທົບຈາກໂຄງການ ຕ້ອງໄດ້ຮັບຄ່າທົດແທນຕາມຫົວໜ່ວຍລາຄາ ຂອງຂະແໜງການກ່ຽວຂ້ອງ ທີ່ອົງການປົກຄອງນະຄອນຫຼວງວຽງຈັນ ໄດ້ຕົກລົງຮັບຮອງເອົາ.

8.3. ການທົດແທນສິດໃຊ້ ແລະ ສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ ແລະ ຜົນລະປູກ ຈະມີບົດບັນທຶກລະຫວ່າງຜູ້ທີ່ຖືກຜົນກະທົບ ກັບອົງການປົກຄອງບ້ານ, ຄະນະກຳມະການໄກ່ເກ່ຍ, ທີ່ປຶກສາການຈັດສັນ-ຍົກຍ້າຍ, ສະຖາບັນຄົ້ນຄວ້າ ໂຍທາທິການ ແລະ ຂົນສົ່ງ ກະຊວງໂຍທາທິການ ແລະ ຂົນສົ່ງ. ການຈ່າຍເງິນທົດແທນພາຍຫຼັງທີ່ຜູ້ຖືກຜົນກະທົບ ເຊັນຮັບຮອງເອົາມູນຄ່າທົດແທນແລ້ວ ຈະໄດ້ໂອນເງິນເຂົ້າບັນຊີເງິນຝາກຂອງຜູ້ຖືກຜົນກະທົບ ໂດຍຜ່ານທະນາຄານການຄ້າຕ່າງປະເທດລາວມະຫາຊົນ ຫຼື ມອບເປັນແຊັກ ໃຫ້ຜູ້ຖືກຜົນກະທົບໂດຍກົງ.

**ມາດຕາ 9 ພາກສ່ວນຮັບຜິດຊອບໂຄສະນາ, ປະຊາສຳພັນ**

ຄະນະກຳມະການໄກ່ເກ່ຍສິ່ງກີດຂວາງໂຄງການທາງ 13 ເໜືອ, ທີ່ປຶກສາໂຄງການ, ສະຖາບັນຄົ້ນຄວ້າ ໂຍທາທິການ ແລະ ຂົນສົ່ງ, ກົມຂົວທາງ ກະຊວງໂຍທາທິການ ແລະ ຂົນສົ່ງ, ອົງການປົກຄອງບ້ານທີ່ກ່ຽວຂ້ອງ, ອົງການປົກຄອງເມືອງນາຊາຍທອງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກກະສິກຳ ແລະ ປ່າໄມ້, ພະແນກການເງິນ, ພະແນກແຜນການ ແລະ ການລົງທຶນ ແລະ ທຸກການຈັດຕັ້ງຂອງພັກ-ລັດ ຂອງສັງຄົມທີ່ກ່ຽວຂ້ອງ ມີໜ້າທີ່ໂຄສະນາ, ປະຊາສຳພັນ ແລະ ປຸກລະດົມປະຊາຊົນຜູ້ທີ່ຖືກຜົນກະທົບ ໃຫ້ເຂົ້າໃຈເຫັນດີ ແລະ ປະກອບສ່ວນຂອງຕົນຊ່ວຍລັດຖະບານ ເພື່ອຈັດຕັ້ງປະຕິບັດໂຄງການ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**ມາດຕາ 10 ການແກ້ໄຂຂໍ້ຂັດແຍ່ງ**

ກໍລະນີຜູ້ຖືກຜົນກະທົບ ບໍ່ຮັບເອົາຄ່າທົດແທນ ຕາມມູນຄ່າທີ່ໄດ້ຕົກລົງກັນເປັນລາຍລັກອັກສອນ ຫຼື ກໍລະນີເກີດຂໍ້ຂັດແຍ່ງອື່ນໆ ທີ່ກ່ຽວຂ້ອງກັບການທົດແທນ ໃນເຂດໂຄງການທາງ 13 ເໜືອ, ຜູ້ທີ່ຖືກຜົນກະທົບ ມີສິດສະເໜີແກ້ໄຂທາງບໍລິຫານ ຫາການຈັດຕັ້ງລັດທີ່ກ່ຽວຂ້ອງ ເຊັ່ນ: ຄະນະກຳມະການໄກ່ເກ່ຍຂັ້ນບ້ານ, ຄະນະກຳມະການໄກ່ເກ່ຍຂັ້ນເມືອງ, ຄະນະກຳມະການໄກ່ເກ່ຍຂັ້ນນະຄອນຫຼວງ ແລະ ຂັ້ນສູນກາງ (ຄະນະຄຸ້ມຄອງໂຄງການ, ສະຖາບັນຄົ້ນຄວ້າ ໂຍທາທິການ ແລະ ຂົນສົ່ງ ແລະ ກົມຂົວທາງ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນໃຈກາງໃນການແກ້ໄຂບັນຫາ).

**ມາດຕາ 11 ການຈັດຕັ້ງປະຕິບັດ**

ມອບໃຫ້ຄະນະຊີ້ນຳໂຄງການ, ສະຖາບັນຄົ້ນຄວ້າ ໂຍທາທິການ ແລະ ຂົນສົ່ງ ກະຊວງໂຍທາທິການ ແລະ ຂົນສົ່ງ, ຄະນະກຳມະການໄກ່ເກ່ຍສິ່ງກີດຂວາງໂຄງການທາງ 13 ເໜືອ, ອົງການປົກຄອງເມືອງນາຊາຍທອງ, ອົງການປົກຄອງບ້ານກ່ຽວຂ້ອງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກກະສິກຳ ແລະ ປ່າໄມ້, ພະແນກການເງິນ,

ພະແນກແຜນການ ແລະ ການລົງທຶນ, ທຸກການຈັດຕັ້ງພັກ-ລັດ, ສັງຄົມ ນະຄອນຫຼວງວຽງຈັນ, ທີ່ປຶກສາໂຄງການ ແລະ ຜູ້ທີ່ຖືກຜົນກະທົບທັງໝົດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ທັນເວລາ.

**ມາດຕາ 12** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ຈັດພິມລົງເຜີຍແຜ່ໃນຈົດໝາຍເຫດທາງລັດຖະການ 15 ວັນ ເປັນຕົ້ນໄປ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ປອ.ສິນລະວົງ ຄຸດໄພທູນ

<u>ບ່ອນສົ່ງ:</u>

| | |
|---|---|
| - ເຈົ້າຄອງ-ຮອງເຈົ້າຄອງ ນະຄອນຫຼວງວຽງຈັນ ທ່ານລະ | 01 ສະບັບ; |
| - ຫ້ອງວ່າການສູນກາງພັກ | 01 ສະບັບ; |
| - ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 01 ສະບັບ; |
| - ຄະນະເລຂາທິການ ສະພາແຫ່ງຊາດ | 01 ສະບັບ; |
| - ກະຊວງໂຍທາທິການ ແລະ ຂົນສົ່ງ | 01 ສະບັບ; |
| - ກະຊວງກະສິກຳ ແລະ ປ່າໄມ້ | 01 ສະບັບ; |
| - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | 01 ສະບັບ; |
| - ກະຊວງແຜນການ ແລະ ການລົງທຶນ | 01 ສະບັບ; |
| - ສະຖາບັນຄົ້ນຄ້ວາ ໂຍທາທິການ ແລະ ຂົນສົ່ງ | 01 ສະບັບ; |
| - ຄະນະເລຂາທິການ ສະພາປະຊາຊົນ ນະຄອນຫຼວງວຽງຈັນ | 01 ສະບັບ; |
| - ຄະນະຊີ້ນຳໂຄງການ ແລະ ຄະນະກຳມະການ ໄກ່ເກ່ຍສິ່ງກີດຂວາງໂຄງການ ທ່ານລະ | 01 ສະບັບ; |
| - ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນວ | 01 ສະບັບ; |
| - ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ | 01 ສະບັບ; |
| - ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ | 01 ສະບັບ; |
| - ພະແນກການເງິນ ນະຄອນຫຼວງວຽງຈັນ | 01 ສະບັບ; |
| - ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ | 01 ສະບັບ; |
| - ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ | 01 ສະບັບ; |
| - ອົງການປົກຄອງບ້ານກ່ຽວຂ້ອງ ບ້ານລະ | 01 ສະບັບ; |
| - ເກັບມ້ຽນສຳເນົາ | 02 ສະບັບ. |